ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພາຍໃນ ເລກທີ 218/ພນ

ນະຄອນຫຼວງວຽງຈັນ, ວັນທີ 27 ມີນາ 2024

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຂະແໜງການພາຍໃນ ເຂດເສດຖະກິດພິເສດສາມຫຼ່ຽມຄຳ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງພາຍໃນ ສະບັບເລກທີ 575/ນຍ, ລົງວັນທີ 28 ກັນຍາ 2021;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ອົງການຄຸ້ມຄອງ-ບໍລິຫານເຂດເສດຖະກິດພິເສດ ສາມຫຼ່ຽມຄຳ ສະບັບເລກທີ 359/ນຍ, ລົງວັນທີ 22 ພະຈິກ 2023;
- ອີງຕາມ ໜັງສືສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 134 /ຈພ, ລົງວັນທີ 22 ມີນາ 2024.

## ລັດຖະມົນຕີ ຕົກລົງ

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງດ້ານນິຕິກຳໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຂະແໜງການພາຍໃນເຂດເສດຖະກິດພິເສດສາມຫຼ່ຽມຄຳ ແນໃສ່ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງພົນລະເມືອງໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ຂະແໜງການພາຍໃນເຂດເສດຖະກິດພິເສດສາມຫຼ່ຽມຄຳ ແມ່ນການຈັດຕັ້ງສະເພາະກິດໜຶ່ງໃນໂຄງປະກອບກົງຈັກການຈັດຕັ້ງ ຂອງອົງການຄຸ້ມຄອງ-ບໍລິຫານ ເຂດເສດຖະກິດພິເສດ ສາມຫຼ່ຽມຄຳ ແລະ ກະຊວງພາຍໃນ; ມີພາລະບົດບາດເປັນເສນາທິການໃຫ້ແກ່ຄະນະອົງການຄຸ້ມຄອງ-ບໍລິຫານ ເຂດເສດຖະກິດພິເສດສາມຫຼ່ຽມຄຳ ແລະ ລັດຖະມົນຕີກະຊວງພາຍໃນ ກ່ຽວກັບວຽກງານ ການຈົດທະບຽນ ການເກີດ, ການແຕ່ງດອງ, ການຢ່າຮ້າງ, ການປ່ຽນຊື່ ຫຼື ນາມສະກຸນ, ການເສຍຊີວິດ, ການຍົກຍ້າຍ ແລະ ເກັບກຳສະຖິຕິ ຂອງພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດ ຢູ່ເຂດເສດຖະກິດພິເສດ ສາມຫຼ່ຽມຄຳ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ຂະແໜງການພາຍໃນ ເຂດເສດຖະກິດພິເສດ ສາມຫຼ່ຽມຄໍາ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ-ລັດ, ລັດຖະທໍາມະນູນ, ກົດໝາຍ ແລະ ນິຕິກໍາຕ່າງໆ; ໂຄສະນາ, ເຜີຍແຜ່, ແນະນໍາ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ໃນແຕ່ລະໄລຍະ;
2. ໂຄສະນາເຜີຍແຜ່, ຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງພົນລະເມືອງ ໃຫ້ສອດຄ່ອງ ຕາມກົດໝາຍ ແລະ ລະບຽບການ;
3. ຄຸ້ມຄອງ, ນໍາໃຊ້ຖານຂໍ້ມູນໃນການຈົດທະບຽນ ແລະ ອອກໃບຢັ້ງຢືນ ການເກີດ, ການແຕ່ງດອງ, ການຢ່າຮ້າງ, ການປ່ຽນຊື່ ຫຼື ນາມສະກຸນ, ການເສຍຊີວິດ ແລະ ການຍົກຍ້າຍຂອງພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຕ່າງປະເທດ ຢູ່ ເຂດເສດຖະກິດພິເສດ ສາມຫຼ່ຽມຄໍາ ຕາມກົດໝາຍ ແລະ ລະບຽບການ;
4. ຮ່ວມມື ແລະ ປະສານສົມທົບກັບບັນດາຫ້ອງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນວຽກງານຄຸ້ມຄອງພົນລະເມືອງຢູ່ ເຂດເສດຖະກິດພິເສດ ສາມຫຼ່ຽມຄໍາ;
5. ເກັບກໍາ, ສັງລວມ ແລະ ລາຍງານສະຖິຕິພົນລະເມືອງ ໃຫ້ແກ່ຄະນະອໍານວຍການຄຸ້ມຄອງ-ບໍລິຫານ ເຂດເສດຖະກິດພິເສດສາມຫຼ່ຽມຄໍາ ແລະ ລັດຖະມົນຕີກະຊວງພາຍໃນ;
6. ສ້າງແຜນການ, ແຜນງົບປະມານຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ, ຄຸ້ມຄອງຊັບສິນ, ຮັບຜິດຊອບວຽກງານບໍລິຫານ-ພິທີການຂອງຫ້ອງການ; ພົວພັນຮ່ວມມືກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ;
7. ສະໜອງຂໍ້ມູນຂ່າວສານ, ລາຍງານສະພາບການເຄື່ອນໄຫວວຽກງານ ໃຫ້ຂັ້ນເທິງຮັບຊາບ ຢ່າງເປັນປົກກະຕິ ແລະ ທັນເວລາ;
8. ສະຫຼຸບສັງລວມ, ລາຍງານການຈັດຕັ້ງປະຕິບັດວຽກງານໃນແຕ່ລະໄລຍະ ປະຈໍາເດືອນ, 3 ເດືອນ, 6 ເດືອນ ແລະ ປະຈໍາປີ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;
9. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ແລະ ລະບຽບ-ກົດໝາຍ ກໍານົດ.

**ມາດຕາ 4 ຂອບເຂດສິດ**

ຂະແໜງການພາຍໃນ ເຂດເສດຖະກິດພິເສດ ສາມຫຼ່ຽມຄໍາ ມີສິດດັ່ງນີ້:

1. ລາຍງານ, ສະເໜີຂໍຄໍາເຫັນຊີ້ນໍາຈາກຄະນະຄຸ້ມຄອງ-ບໍລິຫານເຂດເສດຖະກິດພິເສດ ສາມຫຼ່ຽມຄໍາ ແລະ ກະຊວງພາຍໃນ ເພື່ອແກ້ໄຂວຽກງານສໍາຄັນ ຈໍາເປັນ ແລະ ຮີບດ່ວນ ທີ່ພົວພັນເຖິງພາລະບົດບາດ, ໜ້າທີ່ຂອງຕົນ;
2. ເຊັນເອກະສານ ຕາມພາລະບົດບາດ, ໜ້າທີ່ ແລະ ຕາມການມອບໝາຍຂອງຄະນະນໍາອໍານວຍການຄຸ້ມຄອງ-ບໍລິຫານ ເຂດເສດຖະກິດພິເສດສາມຫຼ່ຽມຄໍາ;
3. ຂຶ້ນແຜນ, ຄຸ້ມຄອງນໍາໃຊ້ງົບປະມານ, ພາຫະນະ ແລະ ຊັບສົມບັດຕ່າງໆ ຂອງຫ້ອງການໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;
4. ຄຸ້ມຄອງພະນັກງານ-ລັດຖະກອນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ທາງດ້ານປະລິມານ ແລະ ຄຸນນະພາບ, ຄົ້ນຄວ້າປະຕິບັດນະໂນບາຍຕ່າງໆ ລວມທັງການປະຕິບັດວິໄນຕໍ່ພະນັກງານ ໂດຍສອດຄ່ອງ ຕາມກົດໝາຍ ແລະ ລະບຽບການ;

5. ພົວພັນ, ປະສານງານ, ຮຽກໂຮມປະຊຸມ ແລະ ເຂົ້າຮ່ວມກອງປະຊຸມປະກອບຄໍາເຫັນ, ພົບປະເຈລະຈາກັບພາກສ່ວນຕ່າງໆ ຕາມການມອບໝາຍ ຂອງຄະນະນໍາອົງການຄຸ້ມຄອງ-ບໍລິຫານ ເຂດເສດຖະກິດພິເສດສາມຫຼ່ຽມຄໍາ;
6. ປະຕິບັດສິດອື່ນໆ ຕາມການມອບໝາຍຂອງຂັ້ນເທິງ ຫຼື ຕາມກົດໝາຍ ແລະ ລະບຽບການກໍານົດ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ຂະແໜງການພາຍໃນ ເຂດເສດຖະກິດພິເສດ ສາມຫຼ່ຽມຄໍາ ປະກອບມີ:

1. ໜ່ວຍງານ ຄຸ້ມຄອງພົນລະເມືອງ

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ບຸກຄະລາກອນຂອງຂະແໜງການພາຍໃນ ເຂດເສດຖະກິດພິເສດ ສາມຫຼ່ຽມຄໍາ ປະກອບດ້ວຍ:

1. ຫົວໜ້າຂະແໜງພາຍໃນ ຈໍານວນ 01 ທ່ານ ມີຄວາມຮັບຜິດຊອບຕໍ່ ຄະນະອົງການຄຸ້ມຄອງ-ບໍລິຫານ ເຂດເສດຖະກິດພິເສດສາມ ຫຼ່ຽມຄໍາ ແລະ ລັດຖະມົນຕີກະຊວງພາຍໃນ ກ່ຽວກັບຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງ; ໃນເວລາຕິດຂັດ ຫົວໜ້າຕ້ອງມອບສິດໃຫ້ຮອງຫົວໜ້າເປັນຜູ້ຮັກສາການແທນ.
2. ຮອງຫົວໜ້າຂະແໜງການພາຍໃນ ຈໍານວນ 01 ທ່ານ, ຊ່ວຍຫົວໜ້າຂະແໜງພາຍໃນ ໃນການຊີ້ນໍາວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຫົວໜ້າຂະແໜງພາຍໃນ ກ່ຽວກັບຜົນສໍາເລັດ ແລະ ຂໍ້ຂາດຕົກບົກຜ່ອງ ຂອງຂົງເຂດວຽກງານທີ່ຕົນຊີ້ນໍາ;

   ຮອງຫົວໜ້າຂະແໜງພາຍໃນ ຜູ້ຮັກສາການແທນຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າຂະແໜງພາຍໃນ ຫຼັງຈາກກັບມາປະຈໍາການ.
3. ລັດຖະກອນວິຊາການຈໍານວນໜຶ່ງ ຕາມການກໍານົດຕໍາແໜ່ງງານ;

   ສໍາລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກໍານົດໄວ້.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7 ຫຼັກການ**

ຂະແໜງການພາຍໃນເຂດເສດຖະກິດພິເສດ ສາມຫຼ່ຽມຄໍາ ເຄື່ອນໄຫວຕາມຫຼັກການດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ ໂດຍມີການສົມທົບລະຫວ່າງ ຄວາມຮັບຜິດຊອບຂອງໝູ່ຄະນະ ກັບການຍົກສູງຄວາມຮັບຜິດຊອບຂອງບຸກຄົນ;

2. ປະຕິບັດລະບອບຫົວໜ້າດຽວຕາມການແບ່ງຂັ້ນຄຸ້ມຄອງ ແລະ ບົນພື້ນຖານການແບ່ງງານກັນຢ່າງຈະແຈ້ງໃນໝູ່ຄະນະ ແລະ ທຸກຂັ້ນດ້ວຍຄວາມຮັບຜິດຊອບ;

3. ທຸກການເຄື່ອນໄຫວວຽກງານແມ່ນອີງໃສ່ແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 8 ແບບແຜນວິທີເຮັດວຽກ**

ຂະແໜງການພາຍໃນ ເຂດເສດຖະກິດພິເສດ ສາມຫຼ່ຽມຄຳ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ທຸກການເຄື່ອນໄຫວຂອງຂະແໜງພາຍໃນແມ່ນອີງໃສ່ຫຼັກການ ແລະ ລະບຽບການຂອງອົງການຄຸ້ມຄອງ-ບໍລິຫານ ເຂດເສດຖະກິດພິເສດສາມຫຼ່ຽມຄຳ, ຂອງແຂວງ ແລະ ກະຊວງພາຍໃນ;
2. ເຮັດວຽກຢ່າງມີແຜນການ, ແຜນງານ ແລະ ໂຄງການລະອຽດ;
3. ປະສານສົມທົບກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງຢ່າງແໜ້ນແຟ້ນ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;
4. ປະຕິບັດລະບອບປະຊຸມ, ສ່ອງແສງລາຍງານປະຈຳເດືອນ, 03 ເດືອນ, 06 ເດືອນ, ປະຈຳປີ ແລະ ກອງປະຊຸມວິຊາການຕ່າງໆ ເພື່ອຊຸກຍູ້ ຕິດຕາມ, ກວດກາ, ເກັບກຳສະພາບລວມ ແລະ ສະເພາະດ້ານ ຈາກທຸກຂົງເຂດວຽກງານ ແລະ ສັງລວມລາຍງານອົງການປົກຄອງແຂວງ ແລະ ກະຊວງພາຍໃນເປັນປົກກະຕິ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ, ຕາປະທັບ ແລະ ທີ່ພັກ**

1) ຂະແໜງການພາຍໃນ ເຂດເສດຖະກິດພິເສດ ສາມຫຼ່ຽມຄຳ ມີງົບປະມານ ແລະ ຕາປະທັບ ຂຶ້ນກັບອົງການຄຸ້ມຄອງ-ບໍລິຫານ ເຂດເສດຖະກິດພິເສດສາມຫຼ່ຽມຄຳ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກຳນົດ.

2) ຫ້ອງການ ແລະ ສະຖານທີ່ພັກເຊົາ ແມ່ນຜູ້ພັດທະນາເຂດເສດຖະກິດສາມຫຼ່ຽມຄຳ ເປັນຜູ້ສະໜອງໃຫ້.

**ມາດຕາ 10 ການຈັດຕັ້ງປະຕິບັດ**

ອົງການຄຸ້ມຄອງ-ບໍລິຫານ ເຂດເສດຖະກິດພິເສດສາມຫຼ່ຽມຄຳ, ບັນດາກົມສັງກັດກະຊວງພາຍໃນ, ພະແນກພາຍໃນແຂວງ, ບັນດາພະແນກການ ແລະ ອົງການທຽບເທົ່າພະແນກ, ຫ້ອງການຂັ້ນເມືອງໃນທົ່ວແຂວງ, ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ;

**ມາດຕາ 11 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງພາຍໃນ ລັດຖະມົນຕີ

ປອ. ທອງຈັນ ມະນີໄຊ

ບ່ອນສົ່ງ:

- ຫ້ອງການກະຊວງ 01 ສະບັບ
- ກົມຈັດຕັ້ງ ແລະ ພະນັກງານ 01 ສະບັບ
- ກົມຄຸ້ມຄອງພົນລະເມືອງ 01 ສະບັບ
- ພະແນກພາຍໃນແຂວງບໍ່ແກ້ວ 01 ສະບັບ
- ຂະແໜງພາຍໃນ ເຂດເສດຖະກິດພິເສດ 01 ສະບັບ